ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

*********************

ກະຊວງການເງິນ

ເລກທີ 2456 /ກງ

ນະຄອນຫລວງວຽງຈັນ, ວັນທີ 23 JUL 2015

## ແຈ້ງການ

ຮຽນ: - ບັນດາກະຊວງ, ອົງການທຽບເທົ່າຂັ້ນສູນກາງ ທີ່ນັບຖື,

- ບັນດາແຂວງ, ນະຄອນຫລວງວຽງຈັນ.

ເລື່ອງ: ການຈັດຕັ້ງປະຕິບັດ ອະນຸມັດສິດໃຊ້ທີ່ດິນລັດ, ເຮືອນລັດ, ການມອບ-ໂອນ, ການປ່ຽນແປງສິດຄຸ້ມຄອງ, ການໃຫ້ເຊົ່າ ຫລື ສໍາປະທານທີ່ດິນຂອງລັດ.

- ອີງຕາມ ກົດໝາຍວ່າດ້ວຍຊັບສິນຂອງລັດ (ສະບັບປັບປຸງ) ເລກທີ 14/ສພຊ, ລົງວັນທີ 05/07/2012.
- ອີງຕາມ ດໍາລັດຂອງນາຍົກລັດຖະມົນຕີ ເລກທີ 80/ກງ, ລົງວັນທີ 28/02/2007 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ.
- ອີງຕາມ ດໍາລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 343/ນຍ, ລົງວັນທີ 25/09/2007 ວ່າດ້ວຍການປະຕິບັດ ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ຄຸນງາມຄວາມດີ ໃນພາລະກິດຮັບໃຊ້ ການປະຕິວັດຊາດ ປະຊາທິຊາທິປະໄຕ.

ກະຊວງການເງິນ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບ ກ່ຽວກັບ ການຈັດຕັ້ງປະຕິບັດ ອະນຸມັດສິດໃຊ້ທີ່ດິນລັດ, ເຮືອນລັດ, ການມອບ-ໂອນ, ການປ່ຽນແປງສິດຄຸ້ມຄອງ, ການໃຫ້ເຊົ່າ ຫລື ສໍາປະທານທີ່ດິນຂອງລັດ ໃຫ້ບຸກຄົນ, ນິຕິບຸກຄົນ, ພະນັກງານ-ລັດຖະກອນ, ພະນັກງານບໍານານ ເພື່ອເຮັດໃຫ້ມີຄວາມເປັນເອກະພາບ ໃນຂອບເຂດທົ່ວປະເທດ, ຊຶ່ງມີລາຍລະອຽດ ດັ່ງນີ້:

1. ການອະນຸຍາດສິດໃຊ້ທີ່ດິນຂອງລັດ, ເຮືອນລັດ, ການມອບ-ໂອນ ສິດໃຊ້ທີ່ດິນຂອງລັດ ໃຫ້ບຸກຄົນ, ນິຕິບຸກຄົນ ໃຫ້ປະຕິບັດຕາມ ກົດໝາຍວ່າດ້ວຍຊັບສິນຂອງລັດ (ສະບັບປັບປຸງ) ເລກທີ 14/ສພຊ, ລົງວັນທີ 05/07/12, ມາດຕາ 52 ຂໍ້ 6 ທີ່ໄດ້ລະບຸໄວ້ວ່າ: ການອອກອະນຸຍາດສິດໃຊ້ທີ່ດິນ, ເຮືອນລັດ, ການມອບ-ໂອນ, ການປ່ຽນສິດຄຸ້ມຄອງ, ການໃຫ້ເຊົ່າ ຫລື ສໍາປະທານ, ການເອົາເຂົ້າຮຸ້ນ ຫລື ຮ່ວມທຶນ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ແລະ ພະນັກງານທີ່ມີເງື່ອນໄຂ ໄດ້ຮັບນະໂຍບາຍ ຕາມດໍາລັດຂອງນາຍົກລັດຖະມົນຕີ, ສະບັບເລກທີ 343/ນຍ, ລົງວັນທີ 25/09/2007 ແມ່ນໃຫ້ສືບຕໍ່ຈັດຕັ້ງປະຕິບັດຕາມ ການຢັ້ງຢືນຜົນງານຂອງເພິ່ນຄືເກົ່າ ແລະ ແບ່ງຄວາມຮັບຜິດຊອບ ລະຫວ່າງ ສູນກາງ ແລະ ທ້ອງຖິ່ນໃຫ້ລະອຽດ;

2. ການຄົ້ນຄວ້າ ແລະ ອອກຂໍ້ຕົກລົງ ກ່ຽວກັບ ການອະນຸຍາດສິດໃຊ້ທີ່ດິນຂອງລັດ ໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຫັນສິດໃຊ້ທີ່ດິນຂອງລັດ ມາເປັນສິດນຳໃຊ້ຢ່າງຂາດຕົວ ຕາມດຳລັດຂອງນາຍົກລັດຖະມົນຕີ, ສະບັບເລກທີ 343/ນຍ, ລົງວັນທີ 25/09/2007 ໃຫ້ປະຕິບັດດັ່ງນີ້:

2.1 ພະນັກງານສັງກັດຢູ່ກະຊວງ, ອົງການອ້ອມຂ້າງສູນກາງ.

ກົມຄຸ້ມຄອງຊັບສິນຂອງລັດ ກະຊວງການເງິນ (ພະແນກຄຸ້ມຄອງອະສັງຫາລິມະຊັບ) ເປັນຜູ້ຄົ້ນຄ້ວາໃບຄຳຮ້ອງ ອີງໃສ່ມາດຖານ ແລະ ເງື່ອນໄຂ, ໂດຍສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອລົງເກັບກຳຂໍ້ມູນທີ່ດິນ, ເຮືອນລັດ. ຈາກນັ້ນ, ຈຶ່ງລາຍງານ ຄະນະນຳກະຊວງການເງິນ ເປັນຜູ້ອະນຸມັດຂໍ້ຕົກລົງ;

2.2 ພະນັກງານສັງກັດຢູ່ຂັ້ນເມືອງ, ພະແນກການຕ່າງໆອ້ອມຂ້າງແຂວງ, ນະຄອນຫລວງວຽງຈັນ.

ຫ້ອງການຄຸ້ມຄອງຊັບສິນຂອງລັດ ປະຈຳແຂວງ, ນະຄອນຫລວງ (ຫນ່ວຍງານຄຸ້ມຄອງອະສັງຫາລິມະຊັບ) ເປັນຜູ້ຄົ້ນຄ້ວາໃບຄຳຮ້ອງ ອີງໃສ່ມາດຖານ ແລະ ເງື່ອນໄຂ, ໂດຍສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອລົງເກັບກຳຂໍ້ມູນທີ່ດິນ, ເຮືອນລັດ. ຈາກນັ້ນ, ຈຶ່ງລາຍງານ ຄະນະນຳແຂວງ, ນະຄອນຫລວງ ເປັນຜູ້ອະນຸມັດຂໍ້ຕົກລົງ.

3. ການປະເມີນມູນຄ່າທີ່ດິນລັດ ເພື່ອນະໂຍບາຍໃຫ້ແກ່ພະນັກງານ ທີ່ນອນໃນເງື່ອນໄຂ ດຳລັດຂອງນາຍົກລັດຖະມົນຕີ, ສະບັບເລກທີ 343/ນຍ, ລົງວັນທີ 25/09/2007 ແມ່ນໃຫ້ຄິດໄລ່ເອົາຕາມເຂດປະເມີນລາຄາ ຂອງກົມທີ່ດິນ ທີ່ໄດ້ປະກາດໃຊ້ໃນປະຈຸບັນ ຂອງແຕ່ລະແຂວງ, ນະຄອນຫລວງ ເປັນພື້ນຖານ;

4. ການປະເມີນມູນຄ່າທີ່ດິນລັດ ໃຫ້ບຸກຄົນ ທີ່ບໍ່ນອນໃນເງື່ອນໄຂ ດຳລັດຂອງນາຍົກລັດຖະມົນຕີ, ສະບັບເລກທີ 343/ນຍ, ລົງວັນທີ 25/09/2007 ໃຫ້ອີງໃສ່ລາຄາຕະຫລາດທີ່ຊື້-ຂາຍ ໃນເຂດດັ່ງກ່າວ ໃນແຕ່ລະໄລຍະ;

5. ຊັບສິນທີ່ໄດ້ມາຈາກການຮິບ ຕາມຄຳຕັດສິນຂອງສານ, ຊັບສິນທີ່ບໍ່ມີເຈົ້າຂອງ, ຊັບສິນທີ່ຄົ້ນພົບ ພາຍຫລັງການກວດກາ ຈາກພາກສ່ວນທີ່ກ່ຽວຂ້ອງແລ້ວ ແມ່ນໃຫ້ແຈ້ງ ແລະ ຂຶ້ນບັນຊີຢູ່ຂະແຫນງຄຸ້ມຄອງຊັບສິນຂອງລັດ, ຫ້າມເອົາໄປແຈກຢາຍນຳໃຊ້ ກ່ອນໄດ້ຮັບການຕົກລົງ ຈາກຂະແຫນງການເງິນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຮັບຊາບ ແລະ ປະຕິບັດ ແຈ້ງການນີ້ຢ່າງເຂັ້ມງວດ.

ລັດຖະມົນຕີວ່າການກະຊວງການເງິນ

ດຣ ຈຽມ ພົມວິຫານ